# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 22 ມັງກອນ 2017 ( 1-22-2017 )

---

## ອະທິຖານດ້ວຍຄວາມຍິນດີ

*ດົນປານໃດແລ້ວທີ່ຈົດໝາຍ ຫຼືຂໍ້ຄວາມ ມີຄວາມໝາຍຕໍ່ທ່ານຫຼາຍທີ່ສຸດ ?*

**ຈຸດສຳຄັນໃນບົດຮຽນ**: ການອະທິຖານເປັນໂອກາດທີ່ຈະໄດ້ປະສົບກັບຄວາມຍິນດີ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ສອງສາມປີກ່ອນ, Pharrell Williams ໄດ້ຈັດເພງນຶ່ງຊຶ່ງເປັນເພງດັງທີ່ຊື່ວ່າ "ສຸກສັນ" "Happy" ອອກອາກາດໄປທົ່ວໂລກ. ແຕ່ຂ້າພຣະເຈົ້າປລາດໃຈວ່າ ຖ້າຄົນທີ່ຮ້ອງເພງນີ້ແລ້ວຍັງຄົງເປັນສຸກໃຈໄປອີກຫຼາຍປີກໍຈະດີ. ທຸກວັນນີ້, ເຊື່ອວ່າຄົນຫຼວງຫຼາຍຫັນມານິຍົມເພງ U2's ຫຼາຍກວ່າ. "ຂ້າພຣະເຈົ້າຍັງບໍ່ພົບສິ່ງທີ່ຂ້າພຣະເຈົ້າສແວງຫານັ້ນເລີຍ."

ຄົນປະເພດນີ້ ບໍ່ໄດ້ເປັນຄົນກຸ່ມດຽວໃນປວັດສາດດອກ.

- ກະສັດໂຊໂລໂມນ, ຜູ້ທີ່ອຸດົມສົມບູນໄປດ້ວຍຄວາມຮັ່ງມີ ແລະລວຍຜູ້ຍິງ, ໄດ້ສາຣະພາບວ່າ: "ອະນິຈັງ ອະນິຈັງ ຊີວິດນີ້ອະນິຈັງ ສາຣະພັດລ້ວນແຕ່ອະນິຈັງ" (ປັນຍາຈານ 1:2).
- ອາເລັກຊັນເດີ ມະຫາຣາດ ໄດ້ບັນທຶກວ່າມີການຮ້ອງໄຫ້ໃນເຕັນຂອງເພິ່ນ: "ບໍ່ມີໂລກໃຫ້ຄອບຄອງຕື່ມອີກແລ້ວ".
- Tom Brady, ຫຼັງຈາກ NFL champianship ຄັ້ງທີສາມ, ອຸທານວ່າ, " ຄວນຈະມີຫຼາຍກວ່ານີ້. "

ພວກເຮົາຈະໄປບ່ອນໃດຈຶ່ງຈະພົບກັບຄວາມຍິນດີທີ່ເຕັມລົ້ນ ແລະຕລອດໄປເປັນນິດ.

ຖ້າທ່ານສົນໃຈສແວງຫາຄຳຕອບຕໍ່ຄຳຖາມນີ້, ຍິນດີຕ້ອນຮັບທ່ານສູ່ພຣະທັມຟີລິບປອຍ! ພຣະທັມນີ້ເປັນຈົດໝາຍທີ່ເຕັມລົ້ນດ້ວຍຄວາມຍິນດີ, ໜ້າສົນໃຈ, ເປັນຈົດໝາຍສະບັບນຶ່ງຊຶ່ງຂຽນຂຶ້ນໂດຍທ່ານຜູ້ນຶ່ງຕອນເພິ່ນຢູ່ໃນຄຸກ.

**ພຣະຄັມພີກ່າວວ່າແນວໃດ** : ຟີລິບປອຍ 1:3-11 ( ເບິ່ງຕາມຂໍ້ 1, 2 ແລະ 3 )

### ການສຶກສາພຣະຄັມພີ

### 1. ຟີລິບປອຍ 1:3-6:

*3 ເຮົາລະນຶກເຖິງເຈົ້າທັງຫຼາຍເມື່ອໃດ ກໍໄດ້ຂອບພຣະຄຸນພຣະເຈົ້າຂອງເຮົາທຸກເທື່ອ. 4 ແລະທຸກເວລາທີ່ເຮົາອ້ອນວອນເພື່ອພວກເຈົ້າເຮົາກໍທູນຂໍດ້ວຍໃຈຍິນດີ, 5 ເພາະເຫດທີ່ເຈົ້າທັງຫຼາຍໄດ້ມີສ່ວນໃນງານຂ່າວປະເສີດດ້ວຍກັນ ຕັ້ງແຕ່ວັນຕົ້ນນັ້ນ ແລະຕໍ່ມາຈົນເຖິງບັດນີ້. 6 ເຮົາແນ່ໃຈວ່າພຣະອົງຜູ້ຊົງຕັ້ງຕົ້ນການດີໄວ້ໃນພວກເຈົ້າແລ້ວ ຄົງຈະຊົງກະທຳໃຫ້ສຳເຣັດຈົນເຖິງວັນແຫ່ງພຣະເຢຊູຄຣິດ.*

ທ່ານໂປໂລ ເລີ່ມຕົ້ນຂຽນຈົດໝາຍຂອງເພິ່ນເຖິງຊາວຟີລິບປອຍດ້ວຍຖ້ອຍຄຳທີ່ວ່າ ພີ່ນ້ອງທີ່ມີສ່ວນໃນຂ່າວປະ

ເສີດຂອງເພິ່ນ ດ້ວຍສຳນວນການຂອບຄຸນ, ຄວາມຍິນດີ, ແລະດ້ວຍຄວາມຮັກແພງ. ຄວາມຍິນດີມີເຕັມໄປທົ່ວຈົດໝາຍຂອງທ່ານໂປໂລ, ແລະເປັນຄັ້ງແລກທີ່ເພິ່ນໃຊ້ຖ້ອຍຄຳຊຶ່ງເພິ່ນໄດ້ກ່າວວ່າ "ເຮົາທູນຂໍດ້ວຍໃຈຍິນດີ."

ໃນເມື່ອຖ້ອຍຄຳນີ້ເປັນແນວຄວາມຄິດທີ່ສຳຄັນໃນພຣະທັມຟີລິບປອຍ, ຂໍໃຫ້ເຮົາມາໄຕ່ຕອງຄຳວ່າ "ຍິນດີ" ບຶດນຶ່ງ. ຄວາມຍິນດີມີຄວາມໝາຍເລີກໄປກວ່າຄວາມສຸກ. ຄວາມສຸກຂອງເຮົາເກີດຈາກສິ່ງພາຍນອກ; ມັນກ່ຽວຂ້ອງກັບສະພາບການຕ່າງໆ. ສ່ວນຄວາມຍິນດີຈະຄົງຢູ່ກັບເຮົາບໍ່ຂຶ້ນຢູ່ກັບສິ່ງທີ່ເຮົາມີ ຫຼືສິ່ງທີ່ເຮົາປະສົບ. ເຖິງວ່າຈະເປັນວັນທີ່ຫຍຸ້ງຍາກ, ແຕ່ເຮົາຍັງມີຄວາມຍິນດີ.

ພວກເຮົາພົບຄວາມຍິນດີໃນການຮູ້ຈັກພຣະຄຣິດຢ່າງເລິກເຊິ່ງ. ສິ່ງນີ້ຄ້າຍກັບວ່າຈຶດຈາງ ຫຼືເປັນພື້ນຖານຕື້ນໆ, ແຕ່ເຄັດລັບສູ່ຄວາມຍິນດີແມ່ນການລຽງລຳດັບຄວາມສຳຄັນຂອງເຮົາຕາມລຳດັບແບບນີ້: ພຣະເຢຊູ, ຄົນອື່ນ, ແລະທ່ານເອງ (**JOY** : **J**esus, **O**thers, **Y**ourself).

ທ່ານໂປໂລ ເປັນແບບຢ່າງໃນການມີຊີວິດດ້ວຍໃຈຍິນດີ. ເພິ່ນຍິນດີໃນພຣະຄຣິດເຖິງຈະຍາກລຳບາກກໍຕາມ(ເບິ່ງ ໂຣມ 5:3-5), ແລະ ເພິ່ນດຳຣົງຊີວິດໃນການຮັບໃຊ້ຄົນອື່ນກ່ອນຄິດເຖິງຕົວເພິ່ນເອງ (ຟລປ 2:3-4). ແກ່ນແທ້ໃນຄວາມຍິນດີຂອງທ່ານໂປໂລ ແມ່ນຄວາມຮັກອັນເລິກເຊິ່ງຕໍ່ພຣະຜູ້ໂຜດໃຫ້ພົ້ນ ກາຍເປັນຄວາມຮັກທີ່ຫຼັ່ງໄຫຼສູ່ຄົນອື່ນ. ຄວາມຍິນດີຂອງຄຣິສຕຽນແມ່ນການມີພຣະຄຣິດເປັນໃຈກາງ ແລະຄົນອື່ນເປັນທີ່ຕັ້ງ.

ຈົ່ງສັງເກດວ່າພວກເຮົາບໍ່ໄດ້ເຫັນວ່າທ່ານໂປໂລຂອບຄຸນພຣະເຈົ້າຍ້ອນ*ສິ່ງຂອງ;* ທ່ານໂປໂລຂອບພຣະຄຸນເພາະຄົນເຮົາຕ່າງຫາກ. ທ່ານໂປໂລເຂົ້າໃຈຫຼັກຖານພຣະຄຸນພຣະເຈົ້າໃນຄົນອື່ນ ແລະ ສັຣເສີນພຣະເຈົ້າສຳລັບການງານຂອງພຣະອົງໃນພວກເຂົາ. ໃນຂໍ້ພຣະທັມເຫຼົ່ານີ້, ໂດຍສະເພາະແລ້ວ, ທ່ານໂປໂລເຕັມລົ້ນດ້ວຍຄວາມຍິນດີນຳສິ່ງທີ່ພຣະເຈົ້າໄດ້ກະທຳສຳລັບຊາວຟີລິບປອຍ.

***ທ່ານຈະບັລຍາຍຄວາມແຕກຕ່າງຣະຫວ່າງຄວາມຍິນດີ ແລະ ຄວາມສຸກຢ່າງໃດ ?***

## 2. <u>ຟີລິບປອຍ 1:7-8</u>: .

*7ການທີ່ເຮົາຄິດເຖິງເຈົ້າທັງຫຼາຍດັ່ງນັ້ນກໍສົມຄວນຢູ່ແລ້ວ ເພາະວ່າເຮົາມີໃຈຮັກພວກເຈົ້າທຸກຄົນ ເຈົ້າທັງຫຼາຍໄດ້ຮັບສ່ວນຮ່ວມໃນພຣະຄຸນດ້ວຍກັນກັບເຮົາ ໃນການທີ່ເຮົາຖືກຈຳຈອງ ແລະໃນການກ່າວປ້ອງກັນໃຫ້ຂ່າວປະເສີດນັ້ນຕັ້ງໝັ້ນຄົງຢູ່. 8ເພາະວ່າພຣະເຈົ້າຊົງເປັນພະຍານຝ່າຍເຮົາວ່າ ເຮົາເປັນຫ່ວງພວກເຈົ້າທັງຫຼາຍພຽງໃດຕາມພຣະທັຍເມດຕາຂອງພຣະເຢຊູຄຣິດ.*

ບ່ອນນີ້ ພວກເຮົາພົບເຫັນອາຣົມ ແລະຄວາມອົບອຸ່ນອັນໃຫຍ່ຫຼວງຂອງທ່ານໂປໂລທີ່ມີຕໍ່ຄຣິສຕະຈັກ. ຖ້າເຮົາຮຽນແຕ່ຫຼັກຄຳສອນ ແລະລະບຽບວິນັຍຂອງທ່ານໂປໂລກໍຍັງບໍ່ພຽງພໍ, ພວກເຮົາຍັງຕ້ອງການເຂົ້າໃຈວ່າຄວາມຈິງເປັນຫຼັກຖານໃນຊີວິດຂອງເພິ່ນຢ່າງໃດອີກດ້ວຍ. ເພິ່ນມີຄວາມຮູ້ສຶກຢ່າງແຮງກ້າ ແລະໄດ້ສະແດງຄວາມເມດຕາໃຫ້ເຫັນໃນຄວາມເຊື່ອຂອງເພິ່ນ.

ໃນຂໍ້ທີ 7 "ທ່ານໂປໂລ ກ່າວວ່າເພິ່ນມີໃຈຮັກຊາວຟີລິບປອຍທຸກຄົນ". ຫົວໃຈທີ່ມີຄວາມສັມພັນເລິກເຊິ່ງປາກົດຂຶ້ນຣະຫວ່າງທ່ານໂປໂລ ແລະຜູ້ເຊື່ອເຫຼົ່ານີ້ (ເບິ່ງ 2 ກຣທ 7:3). ໃນຟີລິບປອຍ 2:17, ທ່ານໂປໂລກ່າວວ່າເພິ່ນທຸ້ມເທຊີວິດຂອງເພິ່ນໃຫ້ຊາວຟີລິບປອຍ. ໃນທາງນີ້ທ່ານໂປໂລ ແລະ ຜູ້ເຊື່ອຊາວຟີລິບປອຍເປັນແບບຢ່າງແກ່ເຮົາວ່າມັນມີຄວາມໝາຍຢ່າງໃດທີ່ມີມິດພາບກັບຄຣິສຕຽນຊຶ່ງມີພຣະຄັມພີເປັນສູນກາງ.

***ອຸປສັກໃດແດ່ທີ່ກີດຂວາງພວກເຮົາບໍ່ໃຫ້ສ້າງຄວາມສັມພັນທີ່ເລິກເຊິ່ງກວ່ານີ້ ?***

ທ່ານ ໂປໂລກ່າວວ່າ *"ການທີ່ເຮົາຄິດເຖິງເຈົ້າທັງຫຼາຍດັ່ງນັ້ນກໍສົມຄວນຢູ່ແລ້ວ."* *ມັນສົມຄວນເພາະວ່າ"ເຈົ້າທັງຫຼາຍໄດ້ຮັບສ່ວນຮ່ວມໃນພຣະຄຸນດ້ວຍກັນກັບເຮົາ ໃນການທີ່ເຮົາຖືກຈຳຈອງ ແລະໃນການກ່າວປ້ອງກັນໃຫ້ຂ່າວປະເສີດນັ້ນຕັ້ງໝັ້ນຄົງຢູ່."* ເພາະພຣະເຈົ້າໄດ້ຊົງໂຜດແກ່ເຈົ້າທັງຫຼາຍເພາະເຫັນແກ່ພຣະຄຣິດ ບໍ່ໃຊ່ໃຫ້ພວກເຈົ້າເຊື່ອແຕ່ໃນພຣະອົງເທົ່ານັ້ນ ແຕ່ໃຫ້ພວກເຈົ້າທົນຄວາມທຸກເພາະເຫັນແກ່ພຣະອົງດ້ວຍ. ຄືໃຫ້ເຈົ້າທັງຫຼາຍຕໍ່ສູ້ຢ່າງດຽວກັບທີ່ພວກເຈົ້າໄດ້ເຫັນເຮົາຕໍ່ສູ້ແລ້ວນັ້ນ ແລະຊຶ່ງພວກເຈົ້າໄດ້ຍິນວ່າເຮົາກຳລັງຕໍ່ສູ້ຢູ່ໃນຂະນະນີ້ ( ຟລປ 1:29-30).

ທ່ານໂປໂລ ຍິນດີເພາະຊາວຟີລິບປອຍໄດ້ປະກອບສ່ວນຢ່າງສັດຊື່ຕໍ່ທ່ານໂປໂລ ແລະງານຂ່າວປະເສີດ. ເຂົາເຈົ້າບໍ່ພຽງແຕ່ອູ້ມຊູທ່ານໂປໂລ ໃນຂະນະທີ່ເພິ່ນປະກາດຂ່າວປະເສີດເທົ່ານັ້ນ, ແຕ່ເຂົາເຈົ້າຍັງໄດ້ອູ້ມຊູເພິ່ນໃນການອະທິຖານ ແລະບໍຣິຈາກຊັບສິນອູ້ມຊູໃນເວລາທີ່ເພິ່ນຖືກຈຳຈອງອີກດ້ວຍ. ເຂົາເຈົ້າບໍ່ໄດ້ທັນຫຼົງໃຫ້ທ່ານໂປໂລ ເຂົາເຈົ້າບໍ່ໄດ້ລະອາຍເພາະເພິ່ນ, ເຖິງແມ່ນວ່າການຖືກຈຳຈອງໄດ້ນຳຄວາມລະອາຍຢ່າງໃຫຍ່ຫຼວງມາສູ່ເຂົາເຈົ້າໃນເວລານັ້ນກໍຕາມ. ຄວາມພັກດີຂອງຊາວຟີລິບປອຍຕໍ່ທ່ານໂປໂລແມ່ນວ່າໃນຍາມເພິ່ນຕິດຄຸກຍັງໄດ້ສ້າງຄວາມສັມພັນອັນດີຂຶ້ນ.

ດັ່ງທີ່ທ່ານໂປໂລ ໄດ້ໄຕ່ຄວນເຖິງຄວາມສັມພັນຂອງເພິ່ນກັບຊາວຟີລິບປອຍ ເພິ່ນໄດ້ຖແລງຖ້ອຍຄຳທີ່ປະທັບໃຈວ່າ:*"ເຮົາເປັນຫ່ວງພວກເຈົ້າທັງຫຼາຍພຽງໃດຕາມພຣະທັຍເມດຕາຂອງພຣະເຢຊູຄຣິດ."* ເພິ່ນໄດ້ເຕືອນຄວາມຈຳຂອງເຂົາເຈົ້າເຖິງຄວາມເມດຕາຂອງພຣະຄຣິດ ແລະພຣະເຈົ້າໄດ້ທຳງານໃນຕົວເພິ່ນໃຫ້ຮັກເຂົາເຈົ້າໃນທາງດຽວກັນ. ພາສາກຣີກແປຄຳວ່າ "ພຣະທັຍເມດຕາ" ໝາຍເຖິງທຸກສ່ວນພາຍໃນຂອງຮ່າງກາຍ; ມັນສິ່ງຜົນຄວາມຄິດເມດຕາເລິກໆ.

ທ່ານໂປໂລ ເປັນອັນນຶ່ງອັນດຽວກັບພຣະຄຣິດ, ແລະຍ້ອນຄວາມເປັນອັນນຶ່ງອັນດຽວກັບພຣະຄຣິດຂອງເພິ່ນ, ເພິ່ນຈຶ່ງໄດ້ແບ່ງປັນຄວາມຮັກໃຫ້ຄຣິສຕະຈັກ. ນີ້ເປັນຄວາມຮັກທີ່ເລິກເຊິ່ງ, ຊຶ່ງກວ້າງໄກກວ່າຄວາມຮູ້ສຶກ ແລະເປັນຄວາມຮັກທີ່ພວກເຮົາຈະໄດ້ຮັບເໝືອນກັນ.

***ຊີວິດຂອງກຸ່ມເຮົາຊ່ອຍພວກເຮົາສ້າງຄວາມສັມພັນປະເພດທີ່ທ່ານ ໂປໂລໄດ້ພັລນາໃນຂໍ້ພຣະທັມເຫຼົ່ານີ້ຢ່າງໃດ ?***

## 3. <u>ຟີລິບປອຍ 1:9-11</u> :

*9 ແລະເຮົາອ້ອນວອນຂໍໃຫ້ຄວາມຮັກຂອງເຈົ້າທັງຫຼາຍຈະເຣີນຫຼາຍຂຶ້ນສເມີ ພ້ອມກັບຄວາມຮູ້ແລະຄວາມສັງເກດທຸກຢ່າງ. 10 ເພື່ອເຈົ້າທັງຫຼາຍຈະສັງເກດໄດ້ວ່າ ສິ່ງໃດປະເສີດທີ່ສຸດ ແລະເພື່ອພວກເຈົ້າຈະໄດ້ເປັນຄົນບໍຣິສຸດແລະບໍ່ມີທີ່ຕິໄດ້ໃນວັນແຫ່ງພຣະຄຣິດ, 11 ຈະໄດ້ເປັນຜູ້ບໍຣິສຸດດ້ວຍຜົນຂອງຄວາມຊອບທັມຊຶ່ງເກີດຂຶ້ນດ້ວຍພຣະເຢຊູຄຣິດເພື່ອຖວາຍກຽດ ແລະສັຣເສີນແກ່ພຣະເຈົ້າ.*

ຜູ້ທີ່ມີພຣະຄຣິດເປັນສູນກາງເຕີບໃຫຍ່ຂຶ້ນໃນ "ຄວາມຮູ້ ແລະ ຄວາມສັງເກດທຸກຢ່າງ." ຄວາມຮູ້ຕັ້ງຄຳຖາມວ່າ, "ສິ່ງໃດຖືກຕ້ອງ?" ຄວາມສັງເກດຕັ້ງຄຳຖາມວ່າ, " ສິ່ງໃດດີທີ່ສຸດ? " ຄວາມຮັກຊັກນຳເຮົາໃຫ້ດຳຣົງຊີວິດທັງຖືກຕ້ອງແລະທັງດີທີ່ສຸດ. ຄຣິສຕຽນປະເພດທີ່ເຕີບໂຕແລ້ວຕ້ອງເປັນໄປຕາມພຣະຄັມພີບອກໄວ້ ແລະມີຄວາມຮັກເລິກເຊິ່ງ. ເຫດໃດທ່ານໂປໂລຈຶ່ງປາຖນາຢາກໃຫ້ຊາວຟີລິບປອຍເຕີບໃຫຍ່ຂຶ້ນໃນຄວາມຮັກປະເພດນີ້?

- ເພິ່ນປາຖນາໃຫ້ເຂົາເຈົ້າ "ຍອມຮັບສິ່ງທີ່ສູງທີ່ສຸດ." ທ່ານໂປໂລ ໄດ້ອະທິຖານເພື່ອຊາວຟີລິບປອຍຢາກໃຫ້ເຂົາເຈົ້າເລືອກເອົາສິ່ງທີ່ດີທີ່ສຸດໃນຊີວິດນີ້ ແລະໃນຄວາມສັມພັນຂອງເຂົາເຈົ້າ. ເພິ່ນໄດ້ອ້ອນວອນໃຫ້ເຂົາເຈົ້າມີສາຍຕາທີ່ມອງເຫັນເພື່ອໄຈ້ແຍກຣະຫວ່າງຖືກ ແລະຜິດ, ຣະຫວ່າງດີກວ່າ ແລະດີທີ່ສຸດ, ແລະຣະຫວ່າງສິ່ງທີ່ເປັນບັນຫາ ແລະສິ່ງທີ່ບໍ່ເປັນບັນຫາ.

- ເພິ່ນປາຖນາໃຫ້ເຂົາເຈົ້າ "ເປັນຜູ້ບໍຣິສຸດແລະບໍ່ມີທີ່ຕິໃນວັນຂອງພຣະຄຣິດ." ພຣະຄຣິດຈະສະເດັດກັບມາ, ແລະ ພວກເຮົາຄວນດໍາຣົງຊີວິດ ແລະອະທິຖານໃນແສງສວ່າງແຫ່ງຄວາມຈິງນີ້.

ທ່ານໂປໂລ ໄດ້ແຈ້ງໃຫ້ຮູ້ເຖິງຊີວິດບໍຣິສຸດໃນທາງອື່ນ: " ຈົ່ງເຕັມລົ້ນດ້ວຍຜົນຂອງຄວາມຊອບທັມຊຶ່ງໄດ້ມາໂດຍທາງພຣະເຢຊູຄຣິດ." ຄວາມຊອບທັມຂອງພຣະເຈົ້າໄດ້ຊົງປະທານໃຫ້ແກ່ຜູ້ເຊື່ອໂດຍທາງຄວາມເຊື່ອແຕ່ພຽງເທົ່ານັ້ນ ( ເບິ່ງ ຟລປ 3:9). ພວກເຮົາຖືກປະກາດ ແລະຖືກຍອມຮັບຈາກພຣະເຈົ້າໂດຍທາງພຣະເຢຊູຄຣິດ ຄວາມຊອບທັມຊຶ່ງມາຈາກພາຍນອກເຮົາເອງ. ສໍາຄັນຢູ່ທີ່ວ່າ,ໂດຍ *ຕໍາແໜ່ງ* ອັນຊອບທັມໂດຍທາງພຣະຄຣິດນີ້, ພວກເຮົາຖືກເອີ້ນມາໃຫ້ "*ດໍາຣົງຊີວິດ*ໂດຍຊອບທັມ.

ການອະທິຖານເປັນກຸນແຈຕົ້ນຕໍຂອງຊີວິດຊອບທັມ. ທ່ານ ໂປໂລ ປະສົບຄວາມຍິນດີ ດັ່ງທີ່ເພິ່ນອະທິຖານເພື່ອຕົວເພິ່ນເອງ ແລະເພື່ອຜູ້ທີ່ເພິ່ນຮັກ. ຂໍໃຫ້ສິ່ງດຽວກັນນີ້ຈົ່ງເກີດເປັນຈິງກັບພວກເຮົາເຖີ້ນ.

| |
|---|
| ***ເປັນຫຍັງຄວາມຮູ້ແລະການສັງເກດເຫັນທັງສອງຈຶ່ງເປັນປັດຈັຍທີ່ຈໍາເປັນສໍາລັບການດໍາຣົງຊີວິດເພື່ອຮັກຜູ້ອື່ນ?*** |

## ນໍາໃຊ້ໃນຊີວິດ

ທ່ານຈະລວມເອົາຄວາມຍິນດີເຂົ້າໃນຊີວິດ ແລະການອະທິຖານຂອງທ່ານຢ່າງໃດໃນອາທິດນີ້? ຈົ່ງພິຈາຣະນາຄໍາແນະນໍາຕໍ່ໄປນີ້:

- **ປູກຝັງຄວາມກະຕັນຍູ.** ໃຊ້ເວລາແຕ່ລະວັນນັບພຣະພອນຂອງທ່ານ. ຂນະທີ່ທ່ານອະທິຖານ ແລະຂອບຄຸນພຣະເຈົ້າສໍາລັບທຸກສິ່ງທີ່ພຣະອົງໄດ້ຊົງກະທໍາເພື່ອທ່ານ, ຈົ່ງໃຫ້ຄວາມຍິນດີຂອງພຣະອົງບັນຈຸເຂົ້າໃນໃຈຂອງທ່ານໃຫ້ເຕັມ ແລະໃຫ້ປາກົດເຫັນເມື່ອທ່ານຮັບໃຊ້ຄົນອື່ນ.

- ***ທ່ອງຈໍາຟີລິບປອຍ* 1:6. ຊຶ່ງ**ເປັນການຍາກຈະໃຫ້ຍິນດີໃນເວລາອະທິຖານກ່ຽວກັບບັນຫາໃຫຍ່, ແຕ່ຟີລິບປອຍ 1:6 ແມ່ນຄໍາຢໍ້າເຕືອນວ່າ ພຣະເຈົ້າກໍາລັງທໍາການຢູ່ ເຖິງແມ່ນເຮົາຍັງບໍ່ທັນໄດ້ຮັບຄໍາຕອບກໍຕາມ.

- **ຈົ່ງຮ່ວມກັບຜູ້ອື່ນ.** ຈົ່ງເຂົ້າຮ່ວມກັບຜູ້ອື່ນເພື່ອອະທິຖານກ່ຽວກັບຊີວິດຂອງທ່ານ ແລະກ່ຽວກັບໂອກາດຮັບໃຊ້ພຣະເຈົ້າ ແລະຄົນອື່ນໆ. ຈົ່ງຢໍ້າຄວາມສໍາຄັນຂອງຄວາມຍິນດີທຸກເທື່ອທີ່ທ່ານອະທິຖານຮ່ວມກັນ.

ຢ່າວາງໃຈເຊື່ອໃນສິ່ງທີ່ເຂົາຕົວະວ່າຄວາມຍິນດີຂຶ້ນກັບສະຖານະການຂອງທ່ານໃນປະຈຸບັນ. ທ່ານໂປໂລໄດ້ຂຽນຈົດໝາຍແຫ່ງຄວາມຍິນດີຂອງເພິ່ນໄປຫາຊາວຟີລິບປອຍ (ແລະອະທິຖານຄວາມຍິນດີຂອງເພິ່ນ)ໃນຂນະທີ່ຖືກຂັ່ມເຫັງໃນຄຸກຂອງຊາວໂຣມ. ຈົ່ງເລືອກໃນມື້ນີ້ເພື່ອສແວງຫາຄວາມຍິນດີທີ່ບໍ່ສັ່ນຄອນຊຶ່ງຫາມາໄດ້ໂດຍທາງພຣະຄຣິດເທົ່ານັ້ນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**